ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ລັດຖະບານແຫ່ງ ສປປ ລາວ

ເລກທີ 259 /ລບ

ນະຄອນຫລວງວຽງຈັນ, ວັນທີ 24.08.2011

# ດຳລັດ

## ວ່າດ້ວຍໜັງສືຜ່ານແດນ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍສັນຊາດລາວ ສະບັບເລກທີ 05/ສພຊ, ລົງວັນທີ 17 ພຶດສະພາ 2004;
- ອີງຕາມໜັງສືສະເໜີຂອງກະຊວງການຕ່າງປະເທດ ສະບັບເລກທີ03237/ຕປທ.ກກສ.1, ລົງວັນທີ 16 ມິຖຸນາ 2011.

## ລັດຖະບານ ອອກດຳລັດ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງການອອກ ແລະ ນຳໃຊ້ໜັງສືຜ່ານແດນຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕໍ່ຈາກນີ້ເອີ້ນວ່າ (ໜັງສືຜ່ານແດນ) ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງລາວ ແນໃສ່ອຳນວຍຄວາມສະດວກໃຫ້ເຂົາເຈົ້າໃນການເດີນທາງ ອອກ-ເຂົ້າ ສປປ ລາວ, ພັກເຊົາ ຫລື ອາໄສຢູ່ຕ່າງປະເທດ.

**ມາດຕາ 2. ໜັງສືຜ່ານແດນ**

ໜັງສືຜ່ານແດນ ແມ່ນເອກະສານທາງການຂອງ ສປ ປ ລາວ ທີ່ຢັ້ງຢືນສະຖານະພາບ ແລະ ສັນຊາດຂອງພົນລະເມືອງລາວທີ່ຖືເອກະສານດັ່ງກ່າວ ເພື່ອຈຸດປະສົງອຳນວຍຄວາມສະດວກໃຫ້ແກ່ເຂົາເຈົ້ານຳໃຊ້ໃນການເດີນທາງ ອອກ-ເຂົ້າ ສປປ ລາວ, ພັກເຊົາ ແລະ ອາໄສ ຢູ່ຕ່າງປະເທດ.

ໜັງສືຜ່ານແດນ ແມ່ນຊັບສິນບັດຂອງ ສປປ ລາວ.

ໜັງສືຜ່ານແດນ ສາມາດອ່ານໄດ້ດ້ວຍຕາເປົ່າ, ດ້ວຍເຄື່ອງຈັກ ແລະ ສາມາດປ້ອງກັນການປອມແປງ ຕາມມາດຕະຖານເຕັກນິກສາກົນ.

**ມາດຕາ 3. ປະເພດໜັງສືຜ່ານແດນ**

ໜັງສືຜ່ານແດນ ມີ ສີ່ ປະເພດຄື: ໜັງສືຜ່ານແດນການທູດ, ໜັງສືຜ່ານແດນລັດຖະການ, ໜັງສືຜ່ານແດນທຳມະດາ ແລະ ໜັງສືຜ່ານແດນຊົ່ວຄາວ.

**ມາດຕາ 4. ຄວາມໝາຍຂອງຄຳສັບ**

ຄຳສັບຕ່າງໆທີ່ໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

(1) **ພົນລະເມືອງລາວ** ໝາຍເຖິງ ຜູ້ທີ່ຖືສັນຊາດລາວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສັນຊາດລາວ;

(2) **ສຳນັກງານອອກໜັງສືຜ່ານແດນ** ໝາຍເຖິງກະຊວງການຕ່າງປະເທດ ແລະສຳນັກງານຜູ້ຕາງໜ້າ;

(3) **ສຳນັກງານຜູ້ຕາງໜ້າ** ໝາຍເຖິງ ສະຖານເອກອັກຄະລັດຖະທູດ, ສະຖານກົງສຸນໃຫຍ່ ຫລື ສະຖານກົງສຸນ ແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ;

(4) **ເຈົ້າໜ້າທີ່** ໝາຍເຖິງ ພະນັກງານທີ່ເຮັດວຽກ ຢູ່ສຳນັກງານອອກໜັງສືຜ່ານແດນ;

(5) **ຜູ້ຍື່ນຄຳຮ້ອງ** ໝາຍເຖິງ ບຸກຄົນທີ່ໄດ້ປະກອບເອກະສານຂໍໜັງສືຜ່ານແດນຫົວໃໝ່, ປ່ຽນໜັງສືຜ່ານແດນ, ດັດແກ້, ເພີ່ມເຕີມ, ປ່ຽນແປງຂໍ້ມູນໃນໜັງສືຜ່ານແດນ ຫລື ຕໍ່ອາຍຸນຳໃຊ້ໜັງສືຜ່ານແດນ;

(6) **ລັດຖະກອນ** ໝາຍເຖິງ ພະນັກງານ-ລັດຖະກອນ ທີ່ສັງກັດອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ, ສູນກາງແນວລາວສ້າງຊາດ ຫລື ອົງການຈັດຕັ້ງມະຫາຊົນ.

**ມາດຕາ 5. ການຄຸ້ມຄອງໜັງສືຜ່ານແດນ**

ສຳນັກງານອອກໜັງສືຜ່ານແດນ ເປັນຜູ້ຄຸ້ມຄອງການພິມ, ການອອກ, ການນຳໃຊ້ ແລະ ການກຳນົດຮູບແບບໜັງສືຜ່ານແດນ.

**ມາດຕາ 6. ການກວດກາໜັງສືຜ່ານແດນ**

ເຈົ້າໜ້າທີ່ຕຳຫລວດກວດຄົນເຂົ້າ-ອອກເມືອງປະຈຳດ່ານເຂົ້າ-ອອກ ສປປ ລາວ ມີໜ້າທີ່ປະ

ສານສົມທົບກັບສຳນັກງານອອກຫນັງສືຜ່ານແດນ ເພື່ອກວດກາການນຳໃຊ້ຫນັງສືຜ່ານແດນ ຂອງພົນລະເມືອງລາວທີ່ເດີນທາງເຂົ້າ-ອອກ ສປປ ລາວ ໃຫ້ຖືກຕ້ອງຕາມລະບຽບກົດຫມາຍ ແລະ ດຳລັດສະບັບນີ້. ນອກຈາກນັ້ນ, ເຈົ້າຫນ້າທີ່ຕຳຫລວດກວດຄົນເຂົ້າ-ອອກເມືອງປະຈຳດ່ານເຂົ້າ-ອອກ ສປປ ລາວ ຍັງສາມາດກັກຫນັງສືຜ່ານແດນທີ່ຜູ້ຖືນຳໃຊ້ໃນທາງທີ່ບໍ່ຖືກຕ້ອງ ຫລື ຜູ້ທີ່ນຳໃຊ້ຫນັງສືຜ່ານແດນຂອງຜູ້ອື່ນ ໃນການເດີນທາງເຂົ້າ-ອອກ ສປປ ລາວ ແລ້ວນຳສົ່ງຫນັງສືຜ່ານແດນທີ່ຕົນໄດ້ກັກໄວ້ນັ້ນ ຄືນໃຫ້ສຳນັກງານອອກຫນັງສືຜ່ານແດນ.

**ມາດຕາ 7. ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບພົນລະເມືອງລາວ ແລະ ການຈັດຕັ້ງຂອງ ສປປ ລາວ ລວມທັງຄົນຕ່າງປະເທດ ແລະ ການຈັດຕັ້ງຕ່າງປະເທດ ທັງຢູ່ໃນ ສປປ ລາວ ແລະ ຢູ່ຕ່າງປະເທດ.

**ມາດຕາ 8. ການຮ່ວມມືສາກົນ**

ກະຊວງການຕ່າງປະເທດ ມີຫນ້າທີ່ສົ່ງເສີມການຮ່ວມມືກັບສາກົນໃນຂົງເຂດການຄຸ້ມຄອງ,ການພິມ, ການອອກ ແລະ ການນຳໃຊ້ຫນັງສືຜ່ານແດນ ເພື່ອສະກັດກັ້ນ ແລະ ປ້ອງກັນການກໍ່ອາຊະຍາກຳຂ້າມຊາດທີ່ພົວພັນກັບການນຳໃຊ້ຫນັງສືຜ່ານແດນ ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວມີປະສິດທິພາບ ແລະ ປະສິດທິຜົນ.

ຕົວຢ່າງຫນັງສືຜ່ານແດນ ຈະຖືກແນະນຳໃຫ້ລັດຖະບານຂອງບັນດາປະເທດຕ່າງໆຊາບ ແລະ ຮັບຮູ້ ໂດຍຜ່ານທາງການທູດ.

## ຫມວດທີ 2
## ການອອກຫນັງສືຜ່ານແດນ

**ມາດຕາ 9. ສິດຂອງສຳນັກງານອອກຫນັງສືຜ່ານແດນ**

ສຳນັກງານອອກຫນັງສືຜ່ານແດນ ມີສິດອອກ, ຕໍ່ອາຍຸນຳໃຊ້, ຖອນ ແລະ ລົບລ້າງຫນັງສືຜ່ານແດນ, ດັດແກ້, ເພີ່ມເຕີມ, ປ່ຽນແປງຂໍ້ມູນ ຫລື ລົງຫມາຍເຫດໃນຫນັງສືຜ່ານແດນ ຕາມລະບຽບຫລັກການ ທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

**ມາດຕາ 10. ຫລັກການອອກຫນັງສືຜ່ານແດນ**

ກ່ອນຈະອອກຫນັງສືຜ່ານແດນທຳມະດາໃຫ້ຜູ້ຍື່ນຄຳຮ້ອງ ສຳນັກງານອອກຫນັງສືຜ່ານແດນຕ້ອງສາມາດຢັ້ງຢືນໄດ້ວ່າ ບຸກຄົນດັ່ງກ່າວແມ່ນພົນລະເມືອງລາວ ລວມທັງສະຖານະພາບຂອງຜູ້ກ່ຽວ.

ກ່ອນຈະອອກຫນັງສືຜ່ານແດນການທູດ ຫລື ຫນັງສືຜ່ານແດນລັດຖະການໃຫ້ຜູ້ຍື່ນຄຳຮ້ອງສຳນັກງານອອກຫນັງສືຜ່ານແດນ ຕ້ອງສາມາດຢັ້ງຢືນໄດ້ວ່າບຸກຄົນດັ່ງກ່າວແມ່ນພົນລະເມືອງລາວ ແລະ ເປັນລັດຖະກອນ, ເປັນທະຫານ ຫລື ເປັນຕຳຫລວດ ທີ່ຈະເດີນທາງໄປເຄື່ອນໄຫວວຽກງານທາງການ ແລະ ການທູດ ຢູ່ຕ່າງປະເທດ ລວມທັງສະຖານະພາບຂອງຜູ້ກ່ຽວ.

**ມາດຕາ 11. ຜູ້ມີສິດຖືໜັງສືຜ່ານແດນທຳມະດາ**

ພົນລະເມືອງລາວທຸກຄົນ ມີສິດຖືໜັງສືຜ່ານແດນທຳມະດາ ຕາມບົດບັນຍັດຂອງດຳລັດສະບັບນີ້.

**ມາດຕາ 12. ຜູ້ມີສິດຖືໜັງສືຜ່ານແດນການທູດ ຫລື ລັດຖະການ**

ຜູ້ທີ່ມີສິດຖືໜັງສືຜ່ານແດນການທູດ ຫລື ໜັງສືຜ່ານແດນລັດຖະການ ຕ້ອງແມ່ນພົນລະເມືອງລາວ ຊຶ່ງເປັນລັດຖະກອນ, ທະຫານ ຫລື ຕຳຫລວດ ທີ່ໄດ້ຮັບການມອບໝາຍ ຫລື ແຕ່ງຕັ້ງຈາກບັນດາອົງການທີ່ມີສິດກ່ຽວຂ້ອງ ໃຫ້ເດີນທາງໄປເຄື່ອນໄຫວວຽກງານທາງການ ແລະ ການທູດ ທັງໄລຍະສັ້ນ ແລະ ໄລຍະຍາວ ຢູ່ຕ່າງປະເທດ ຊຶ່ງລາຍລະອຽດມີ ດັ່ງນີ້:

12.1 <u>ຜູ້ມີສິດຖືໜັງສືຜ່ານແດນການທູດ:</u>

ກ. <u>ບຸກຄົນສຳຄັນທີ່ສັງກັດອົງການຈັດຕັ້ງພັກ:</u>

1. ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ກຳມະການກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ແລະ ກຳມະການສູນກາງພັກ;
2. ອະດີດເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ ແລະ ອະດີດກຳມະການກົມການເມືອງສູນກາງພັກ;
3. ເລຂາຄະນະພັກແຂວງ ຫລື ນະຄອນ ແລະ ຮອງເລຂາຄະນະພັກແຂວງ ຫລື ນະຄອນ;
4. ຫົວໜ້າ ແລະ ຮອງຫົວໜ້າອົງການຈັດຕັ້ງພັກຂັ້ນສູນກາງເຊັ່ນ: ຄະນະຈັດຕັ້ງສູນກາງພັກ, ຄະນະພົວພັນຕ່າງປະເທດສູນກາງພັກ, ຄະນະໂຄສະນາ-ອົບຮົມສູນກາງພັກ, ຫ້ອງວ່າການສູນກາງພັກ, ຄະນະກຳມະການກວດກາພັກ-ລັດ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ແລະ ສະຖາບັນຄົ້ນຄວ້າວິທະຍາສາດ-ສັງຄົມແຫ່ງຊາດ;

ຂ. <u>ບຸກຄົນສຳຄັນທີ່ສັງກັດອົງການຈັດຕັ້ງລັດ:</u>

ຂ.1 <u>ສະພາແຫ່ງຊາດ:</u>

1. ປະທານສະພາແຫ່ງຊາດ ແລະ ຮອງປະທານສະພາແຫ່ງຊາດ;
2. ອະດີດປະທານສະພາແຫ່ງຊາດ ແລະ ອະດີດຮອງປະທານສະພາແຫ່ງຊາດ;
3. ກຳມະການຄະນະປະຈຳສະພາແຫ່ງຊາດ;
4. ຫົວໜ້າ ແລະ ຮອງຫົວໜ້າບັນດາກຳມາທິການຂອງສະພາແຫ່ງຊາດ;
5. ຫົວໜ້າ ແລະ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ;
6. ສະມາຊິກສະພາແຫ່ງຊາດ;

## ຂ.2. ສຳນັກງານປະທານປະເທດ:

1. ປະທານປະເທດ ແລະ ຮອງປະທານປະເທດ;
2. ອະດີດປະທານປະເທດ ແລະ ອະດີດຮອງປະທານປະເທດ;
3. ຫົວໜ້າ ແລະ ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ.

## ຂ.3. ລັດຖະບານ:

1. ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີ;
2. ອະດີດນາຍົກລັດຖະມົນຕີ ແລະ ອະດີດຮອງນາຍົກລັດຖະມົນຕີ;
3. ລັດຖະມົນຕີວ່າການ ແລະ ລັດຖະມົນຕີຊ່ວຍວ່າການ, ເຈົ້າແຂວງ ແລະ ຮອງເຈົ້າແຂວງ, ເຈົ້າຄອງນະຄອນ ແລະ ຮອງເຈົ້າຄອງນະຄອນ;
4. ບັນດາຫົວໜ້າ ແລະ ຮອງຫົວໜ້າອົງການຕ່າງໆ ທີ່ມີຕຳແໜ່ງລັດຖະມົນຕີຊ່ວຍວ່າການຂຶ້ນໄປ;
5. ຫົວໜ້າ ແລະ ຮອງຫົວໜ້າກົມໃຫຍ່ຂອງກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ລວມທັງນາຍທະຫານ ແລະ ນາຍຕຳຫລວດທີ່ມີຊັ້ນພົນຈັດຕະວາຂຶ້ນໄປ.

## ຂ.4. ອົງການຕຸລາການ:

1. ປະທານ ແລະ ຮອງປະທານສານປະຊາຊົນສູງສຸດ;

## ຂ.5 ອົງການໄອຍະການປະຊາຊົນສູງສຸດ

1. ຫົວໜ້າ ແລະ ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

## ຄ. ສູນກາງແນວລາວສ້າງຊາດ

1. ປະທານ ແລະ ຮອງປະທານສູນກາງແນວລາວສ້າງຊາດ.

## ງ. ອົງການຈັດຕັ້ງມະຫາຊົນ:

1. ປະທານ ແລະ ຮອງປະທານສູນກາງສະຫະພັນແມ່ຍິງ;
2. ປະທານ ແລະ ຮອງປະທານສູນກາງສະຫະພັນກຳມະບານ;
3. ປະທານ ແລະ ຮອງປະທານສະຫະພັນນັກຮົບເກົ່າ;
4. ເລຂາ ແລະ ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມ ປະຊາຊົນປະຕິວັດລາວ.

## ຈ. ຂະແໜງການຕ່າງປະເທດ:

1. ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ;
2. ອະດີດລັດຖະມົນຕີວ່າການ ກະຊວງການຕ່າງປະເທດ;
3. ລັດຖະມົນຕີຊ່ວຍວ່າການ ກະຊວງການຕ່າງປະເທດ;

4. ອະດີດລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດ;
5. ຜູ້ຊ່ວຍລັດຖະມົນຕີວ່າການກະຊວງການຕ່າງປະເທດ;
6. ອະດີດຜູ້ຊ່ວຍລັດຖະມົນຕີວ່າການກະຊວງການຕ່າງປະເທດ;
7. ເອກອັກຄະລັດຖະທູດ;
8. ອະດີດເອກອັກຄະລັດຖະທູດ;
9. ລັດຖະກອນ ທີ່ມີຊັ້ນການທູດ ຊຶ່ງເດີນທາງໄປເຄື່ອນໄຫວວຽກງານທາງການ ແລະ ການທູດ ຢູ່ຕ່າງປະເທດ;
10. ລັດຖະກອນ ທີ່ມີຊັ້ນການທູດ ທີ່ຖືກແຕ່ງຕັ້ງປະຕິບັດໜ້າທີ່ ຢູ່ສຳນັກງານຕາງໜ້າການທູດ ຂອງ ສປປ ລາວ ຫລື ຢູ່ອົງການຈັດຕັ້ງສາກົນ ຢູ່ຕ່າງປະເທດ ລວມທັງ ຜົວ ຫລື ເມຍ ຫລື ລູກ ທີ່ຍັງບໍ່ທັນພົ້ນກະສຽນອາຍຸ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງພວກກ່ຽວ.

ສ. ຜົວ ຫລື ເມຍ ຂອງບຸກຄົນທີ່ໄດ້ກຳນົດໄວ້ໃນວັກ ກ ຫາ ວັກ ງ, ຂໍ້12.1 ຂອງມາດຕານີ້ ຊຶ່ງຮ່ວມເດີນທາງໄປຕ່າງປະເທດກັບບຸກຄົນດັ່ງກ່າວ.

ຊ. ຜູ້ສົ່ງຖົງເມການທູດ ຫລື ຖົງເມກົງສຸນ.

ຍ. ໃນກໍລະນີພິເສດ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ສາມາດພິຈາລະນາອອກ ໜັງສືຜ່ານແດນການທູດ ໃຫ້ບຸກຄົນທີ່ບໍ່ໄດ້ກຳນົດໄວ້ ແຕ່ ວັກ ກ ຫາ ວັກ ຊ, ຂໍ້12.1 ຂອງ ມາດຕານີ້ ຕາມການສະເໜີຂອງພາກສ່ວນທີ່ມີສິດກ່ຽວຂ້ອງ.

12.2 <u>ຜູ້ມີສິດຖືໜັງສືຜ່ານແດນລັດຖະການ</u>

ກ. ລັດຖະກອນ, ທະຫານ ແລະ ຕຳຫລວດ ທີ່ບໍ່ໄດ້ກຳນົດໄວ້ໃນຂໍ້ 12.1 ທີ່ຖືກແຕ່ງຕັ້ງໄປວຽກ ທາງລັດຖະການ ຢູ່ຕ່າງປະເທດ;

ຂ. ລັດຖະກອນ, ທະຫານ, ຕຳຫລວດ ທີ່ບໍ່ໄດ້ກຳນົດໄວ້ໃນຂໍ້ 12.1 ທີ່ຖືກແຕ່ງຕັ້ງປະຕິບັດໜ້າ ທີ່ຢູ່ສຳນັກງານຜູ້ຕາງໜ້າການທູດຂອງ ສປປ ລາວ ຫລື ຢູ່ອົງການຈັດຕັ້ງສາກົນຢູ່ຕ່າງປະ ເທດ ລວມທັງຜົວ ຫລື ເມຍ ຫລື ລູກ ທີ່ຍັງບໍ່ທັນພົ້ນກະສຽນອາຍຸ ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງ ຂອງພວກກ່ຽວ.

ຄ. ລັດຖະກອນ, ທະຫານ ແລະ ຕຳຫລວດ ທີ່ຖືກແຕ່ງຕັ້ງໄປຍົກລະດັບ, ຮຽນຕໍ່ຢູ່ຕ່າງປະເທດໃນ ໄລຍະກຳນົດ ໜຶ່ງ ປີ ລົງມາ;

ງ. ໃນກໍລະນີພິເສດ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ສາມາດພິຈາລະນາອອກ ໜັງສືຜ່ານແດນລັດຖະການ ໃຫ້ແກ່ບຸກຄົນທີ່ບໍ່ໄດ້ກຳນົດໄວ້ໃນ ວັກ ກ ຫາ ວັກ ຄ, ຂໍ້ 12.2 ຂອງມາດຕານີ້ ຕາມການສະເໜີຂອງພາກສ່ວນທີ່ມີສິດກ່ຽວຂ້ອງ.

ມາດຕາ 13. **ການອອກໜັງສືຜ່ານແດນຊົ່ວຄາວ**

ສຳນັກງານອອກໜັງສືຜ່ານແດນ ຈະອອກໜັງສືຜ່ານແດນຊົ່ວຄາວໃຫ້ພົນລະເມືອງລາວທີ່ເຮັດໜັງສືຜ່ານແດນຂອງຕົນເສຍ, ເສຍຫາຍຈົນໃຊ້ບໍ່ໄດ້ ຫລື ຖືກລັກ ຢູ່ຕ່າງປະເທດ ຕາມການຮ້ອງຂໍ ຫລື ອອກໃຫ້ບຸກຄົນທີ່ໄດ້ກຳນົດໄວ້ໃນ ຂໍ້ 12, ມາດຕາ 19 ຂອງດຳລັດສະບັບນີ້ ເພື່ອນຳໃຊ້ສະເພາະເດີນທາງກັບຄືນປະເທດເທົ່ານັ້ນ.

ບົດບັນຍັດຂອງມາດຕາ 10 ແລະ ມາດຕາ 14 ຂອງດຳລັດສະບັບນີ້ ກໍຈະມີຜົນບັງຄັບໃຊ້ໃຫ້ສອດຄ່ອງກັບການອອກໜັງສືຜ່ານແດນຊົ່ວຄາວ ຕາມທີ່ໄດ້ກຳນົດໄວ້ໃນວັກໜຶ່ງຂອງມາດຕານີ້.

ມາດຕາ 14. **ການຍື່ນຄຳຮ້ອງຂໍໜັງສືຜ່ານແດນ**

ຜູ້ຍື່ນຄຳຮ້ອງ ຈະຕ້ອງຍື່ນສຳນວນຄຳຮ້ອງຂໍໜັງສືຜ່ານແດນແຕ່ລະປະເພດຕໍ່ສຳນັກງານອອກໜັງສືຜ່ານແດນ ຕາມລະບຽບການ ແລະ ຂັ້ນຕອນ ທີ່ສຳນັກງານດັ່ງກ່າວໄດ້ກຳນົດໄວ້. ໃນກໍລະນີທີ່ມີໜັງສືຜ່ານແດນເຫລັ້ມເກົ່າ ຕ້ອງໄດ້ສົ່ງຄືນ ແລະ ຖ້າຫາກຕ້ອງການຮັກສາໄວ້ ສຳນັກງານອອກໜັງສືຜ່ານແດນ ຈະປະທັບຕາລົບລ້າງໃສ່ໃນໜັງສືຜ່ານແດນເຫລັ້ມເກົ່າ.

ມາດຕາ 15. **ອາຍຸນຳໃຊ້ໜັງສືຜ່ານແດນ**

ໜັງສືຜ່ານແດນຊົ່ວຄາວ ມີອາຍຸນຳໃຊ້ສູງສຸດບໍ່ເກີນ ໜຶ່ງ ປີ ແລະ ບໍ່ສາມາດຕໍ່ໄດ້.

ໜັງສືຜ່ານແດນທຳມະດາ ມີອາຍຸນຳໃຊ້ສູງສຸດບໍ່ເກີນ ສິບ ປີ ແລະ ບໍ່ສາມາດຕໍ່ໄດ້.

ໜັງສືຜ່ານແດນທຳມະດາທີ່ອອກໃຫ້ເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ ມີອາຍຸນຳໃຊ້ສູງສຸດບໍ່ເກີນ ຫ້າ ປີ ແລະ ບໍ່ສາມາດຕໍ່ໄດ້.

ໜັງສືຜ່ານແດນການທູດ ແລະ ໜັງສືຜ່ານແດນລັດຖະການ ມີອາຍຸນຳໃຊ້ສູງສຸດ ຫ້າ ປີ ຫລື ມີອາຍຸນຳໃຊ້ ຕາມທີ່ໄດ້ກຳນົດໃນແຕ່ລະໜັງສືຜ່ານແດນທີ່ໄດ້ອອກໃຫ້.

ມາດຕາ 16. **ການຕໍ່ອາຍຸໜັງສືຜ່ານແດນການທູດ ຫລື ໜັງສືຜ່ານແດນລັດຖະການ**

ສຳນັກງານອອກໜັງສືຜ່ານແດນ ຈະຕໍ່ອາຍຸໜັງສືຜ່ານແດນການທູດ ຫລື ໜັງສືຜ່ານແດນລັດຖະການ ຕາມການສະເໜີຂອງຜູ້ຍື່ນຄຳຮ້ອງ ໂດຍສອດຄ່ອງກັບກຳນົດເວລາທີ່ຜູ້ກ່ຽວເດີນທາງໄປເຄື່ອນໄຫວວຽກທາງການຢູ່ຕ່າງປະເທດ.

ມາດຕາ 17. **ຂໍ້ມູນທີ່ບັນຈຸໃນໜັງສືຜ່ານແດນ**

ຂໍ້ມູນທີ່ບັນຈຸໃນໜັງສືຜ່ານແດນ ມີລາຍລະອຽດ ດັ່ງນີ້: ຊື່ ແລະ ນາມສະກຸນ, ເພດ, ວັນເດືອນປີເກີດ, ສະຖານທີ່ເກີດ, ລາຍນິ້ວມື ຫລື ລາຍເຊັນຂອງຜູ້ຖືໜັງສືຜ່ານແດນ, ວັນເດືອນປີ ອອກ ແລະ ໝົດອາຍຸນຳໃຊ້ໜັງສືຜ່ານແດນ, ເຈົ້າໜ້າທີ່ ແລະ ລາຍເຊັນຂອງຜູ້ອອກ ໜັງສືຜ່ານແດນ.

**ມາດຕາ 18. ການດັດແກ້, ເພີ່ມເຕີມ ຫລື ປ່ຽນແປງຂໍ້ມູນ ຫລື ການລົງໝາຍເຫດໃນໜັງສືຜ່ານແດນ**

ສຳນັກງານທີ່ອອກໜັງສືຜ່ານແດນ ມີສິດດັດແກ້, ເພີ່ມເຕີມ, ປ່ຽນແປງຂໍ້ມູນ ຫລື ລົງໝາຍເຫດ ໃນໜັງສືຜ່ານແດນທຸກເຫລັ້ມເມື່ອໃດກໍໄດ້ ເພື່ອຮັບປະກັນໃຫ້ບັນດາຂໍ້ມູນຂອງຜູ້ຖືໜັງສືຜ່ານແດນຖືກຕ້ອງ. ສຳນັກງານອອກໜັງສືຜ່ານແດນ ຈະເປັນຜູ້ກຳນົດເງື່ອນໄຂໃນການດັດແກ້, ເພີ່ມເຕີມ, ປ່ຽນແປງຂໍ້ມູນ ຫລື ການລົງໝາຍເຫດ ໃນແຕ່ລະປະເພດໜັງສືຜ່ານແດນ ເປັນແຕ່ລະກໍລະນີ.

ສຳນັກງານອອກໜັງສືຜ່ານແດນ ມີສິດລຶບລ້າງຂໍ້ມູນທີ່ຕົນໄດ້ດັດແກ້, ເພີ່ມເຕີມ, ປ່ຽນແປງຂໍ້ມູນ ຫລື ການລົງໝາຍເຫດໃນໜັງສືຜ່ານແດນແລ້ວນັ້ນເມື່ອໃດກໍໄດ້.

## ໝວດທີ 3
## ການປະຕິເສດການອອກ, ການລຶບລ້າງ ຫລື ການຖອນໜັງສືຜ່ານແດນ ແລະ ການແຈ້ງໜັງສືຜ່ານແດນເສຍ ຫລື ຖືກລັກ

**ມາດຕາ 19. ການປະຕິເສດການອອກໜັງສືຜ່ານແດນ**

ສຳນັກງານອອກໜັງສືຜ່ານແດນ ຈະປະຕິເສດການອອກໜັງສືຜ່ານແດນໃຫ້ຜູ້ຍື່ນຄຳຮ້ອງ ໃນກໍລະນີ ດັ່ງຕໍ່ໄປນີ້:

1. ຜູ້ທີ່ບໍ່ແມ່ນພົນລະເມືອງລາວ ຫລື ຜູ້ທີ່ໄດ້ເສຍສັນຊາດລາວ;
2. ຜູ້ທີ່ບໍ່ສາມາດຢັ້ງຢືນສະຖານະພາບຂອງຕົນ;
3. ຜູ້ທີ່ໄດ້ໃຫ້ການເທັດ ຫລື ສະໜອງຂໍ້ມູນ ຫລື ເອກະສານບໍ່ຖືກຕ້ອງຕາມຄວາມເປັນຈິງໃນການຍື່ນຄຳຮ້ອງຂໍໜັງສືຜ່ານແດນ;
4. ຜູ້ທີ່ບໍ່ສາມາດສະໜອງຂໍ້ມູນ ແລະ ເອກະສານຄົບຖ້ວນ ຕາມທີ່ສຳນັກງານອອກໜັງສືຜ່ານແດນໄດ້ກຳນົດໄວ້;
5. ຜູ້ທີ່ເຮັດໜັງສືຜ່ານແດນເສຍ ສອງ ເທື່ອ ພາຍໃນ ຫ້າ ປີ;
6. ເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ ທີ່ບໍ່ມີໜັງສືອະນຸຍາດໃຫ້ເດີນທາງໄປຕ່າງປະເທດຂອງພໍ່ ແລະ ແມ່ ທີ່ເປັນຜູ້ປົກຄອງເດັກ ຫລື ຂອງຜູ້ປົກຄອງ ຫລື ບໍ່ມີຄຳສັ່ງຂອງສານປະຊາຊົນ;
7. ຜູ້ທີ່ຖືກສານປະຊາຊົນຕັດສິນລົງໂທດ ຍ້ອນໄດ້ກະທຳຜິດທາງອາຍາ ແລະກຳລັງປະຕິບັດໂທດ;
8. ຜູ້ທີ່ເປັນຈຳເລີຍ ຫລື ເປັນຜູ້ຖືກກ່າວຫາໃນຄະດີອາຍາ;
9. ຜູ້ທີ່ສານປະຊາຊົນ, ໄອຍະການປະຊາຊົນ, ອົງການສືບສວນສອບສວນ, ສຳນັກງານປະຕິບັດຄຳຕັດສິນຂອງສານ ຫລື ອົງການຈັດຕັ້ງທີ່ມີສິດໄດ້ອອກແຈ້ງການຫ້າມເດີນທາງອອກນອກປະເທດ;
10. ຜູ້ທີ່ເຈົ້າໜ້າທີ່ເຊື່ອວ່າ ຖ້າຜູ້ຍື່ນຄຳຮ້ອງຫາກເດີນທາງອອກນອກປະເທດແລ້ວ ອາດຈະກໍ່ຄວາມເສຍຫາຍຕໍ່ຄວາມໝັ້ນຄົງ ຫລື ຜົນປະໂຫຍດຂອງ ສປປ ລາວ;
11. ຜູ້ທີ່ຍັງບໍ່ທັນຊຳລະເງິນຄືນໃຫ້ລັດຖະບານ ແຫ່ງ ສປປ ລາວ ຕາມສັນຍາສຳລັບຄ່າໃຊ້ຈ່າຍຕ່າງໆ ໃນການນຳສົ່ງຜູ້ກ່ຽວກັບຄືນປະເທດ ຫລື ຄ່າໃຊ້ຈ່າຍອື່ນໆ ທີ່ລັດຖະບານ ແຫ່ງ ສ ປປ

ລາວ ໄດ້ໃຫ້ການຊ່ວຍເຫລືອທາງດ້ານກົງສຸນແກ່ຜູ້ກ່ຽວ;

12. ຜູ້ທີ່ນອນຢູ່ໃນກໍລະນີດັ່ງຕໍ່ໄປນີ້ ຈະຖືກປະຕິເສດອອກຫນັງສືຜ່ານແດນ ແຕ່ ຫົກ ເດືອນ ຫາ ສາມ ປີ ນັບແຕ່ວັນໄດ້ສິ້ນສຸດການປະຕິບັດໂທດຢູ່ຕ່າງປະເທດ ຫລື ນັບແຕ່ວັນຖືກປະເທດເຈົ້າພາບໄດ້ເນລະເທດອອກປະເທດ:

(ກ) ຜູ້ທີ່ຖືກສານຕ່າງປະເທດຕັດສິນລົງໂທດຕັດອິດສະລະພາບ ຍ້ອນໄດ້ກະທຳຜິດທາງອາຍາ ຊຶ່ງຖ້າຫາກໄດ້ກະທຳຢູ່ ສປປ ລາວ ກໍຖືວ່າແມ່ນຄວາມຜິດທາງອາຍາເຊັ່ນດຽວກັນ;

(ຂ) ຜູ້ທີ່ຖືກລັດຖະບານຕ່າງປະເທດ ເນລະເທດກັບຄືນປະເທດ ຍ້ອນໄດ້ລັກລອບເດີນທາງອອກຈາກ ສປປ ລາວ ຢ່າງຜິດກົດຫມາຍ ຫລື ຜູ້ທີ່ລັກລອບພັກເຊົາ ຫລື ເຮັດວຽກຢ່າງຜິດກົດຫມາຍ ຢູ່ຕ່າງປະເທດ;

13. ເມື່ອຜູ້ຍື່ນຄຳຮ້ອງ ຖືຫນັງສືຜ່ານແດນປະເພດດຽວກັນທີ່ຍັງມີອາຍຸນຳໃຊ້ຢູ່, ເວັ້ນເສຍແຕ່ຈະໄດ້ຮັບການຍົກເວັ້ນຕາມຫລັກການທີ່ສຳນັກງານອອກຫນັງສືຜ່ານແດນໄດ້ກຳນົດໄວ້ສະເພາະ.

ໃນການປະຕິເສດອອກຫນັງສືຜ່ານແດນ ສຳນັກງານອອກຫນັງສືຜ່ານແດນ ຈະແຈ້ງໃຫ້ຜູ້ຍື່ນຄຳຮ້ອງຊາບ ຢ່າງເປັນລາຍລັກອັກສອນ.

ມາດຕາ 20. **ການລຶບລ້າງຫນັງສືຜ່ານແດນ**

ສຳນັກງານອອກຫນັງສືຜ່ານແດນ ຈະແຈ້ງລຶບລ້າງຫນັງສືຜ່ານແດນທີ່ຜູ້ຖືເປັນບຸກຄົນທີ່ນອນຢູ່ໃນກໍລະນີ ດັ່ງນີ້:

(ກ) ຜູ້ທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງດຳລັດສະບັບນີ້;
(ຂ) ຜູ້ທີ່ນຳໃຊ້ຫນັງສືຜ່ານແດນໃນທາງທີ່ບໍ່ຖືກຕ້ອງ;
(ຄ) ຜູ້ທີ່ເອົາຫນັງສືຜ່ານແດນຂອງຕົນໃຫ້ຜູ້ອື່ນນຳໃຊ້;
(ງ) ຜູ້ທີ່ໄດ້ຫນັງສືຜ່ານແດນໂດຍການສະຫນອງຂໍ້ມູນ ຫລື ເອກະສານບໍ່ຖືກຕ້ອງຕາມຄວາມເປັນຈິງ;
(ຈ) ຜູ້ຖືຫນັງສືຜ່ານແດນໄດ້ເສຍຊີວິດ;
(ສ) ຫນັງສືຜ່ານແດນຫມົດອາຍຸນຳໃຊ້;
(ຊ) ຫນັງສືຜ່ານແດນ ທີ່ຖືກລັກ ຫລື ເສຍ;
(ດ) ຜູ້ຍື່ນຄຳຮ້ອງ ບໍ່ມາຮັບເອົາຫນັງສືຜ່ານແດນພາຍໃນກຳນົດຫົກເດືອນນັບແຕ່ມື້ອອກ;
(ຕ) ຫນັງສືຜ່ານແດນ ຢູ່ໃນການຄອບຄອງຂອງບຸກຄົນອື່ນ ທີ່ບໍ່ແມ່ນຜູ້ຖືໂດຍບໍ່ມີເຫດຜົນພຽງພໍ;
(ຖ) ຖ້າເຈົ້າຫນ້າທີ່ພິຈາລະນາແລ້ວ ເຫັນວ່າ ຫາກຜູ້ຖືຫນັງສືຜ່ານແດນຍັງສືບຕໍ່ຢູ່ຕ່າງປະເທດອີກຕໍ່ໄປ ອາດຈະກໍ່ຄວາມເສຍຫາຍຕໍ່ຜົນປະໂຫຍດຂອງ ສປປ ລາວ ຫລື ຂອງຕ່າງປະເທດ ໄດ້.

ຫນັງສືຜ່ານແດນທີ່ສຳນັກງານອອກຫນັງສືຜ່ານແດນ ໄດ້ປະທັບຕາລຶບລ້າງ ຫລື ແຈ້ງລຶບລ້າງແລ້ວນັ້ນ ຈະນຳໃຊ້ບໍ່ໄດ້.

**ມາດຕາ 21. ການສົ່ງຫນັງສືຜ່ານແດນຄືນ**

21.1 ສຳນັກງານອອກຫນັງສືຜ່ານແດນ ມີສິດອອກຄຳສັ່ງໃຫ້ຜູ້ຖືຫນັງສືຜ່ານແດນສົ່ງ ຫລື ຍຶດຫນັງສືຜ່ານແດນຄືນ ໃນກໍລະນີ ດັ່ງຕໍ່ໄປນີ້:

1) ບຸກຄົນຜູ້ທີ່ໄດ້ກຳນົດໄວ້ໃນມາດຕາ 19 ຂອງດຳລັດສະບັບນີ້ ຊຶ່ງສຳນັກງານອອກຫນັງສືຜ່ານແດນ ໄດ້ອອກຫນັງສືຜ່ານແດນໃຫ້ຜູ້ກ່ຽວແລ້ວນັ້ນ;

2) ຜູ້ທີ່ໄດ້ຮັບຫນັງສືຜ່ານແດນ ໂດຍທີ່ສຳນັກງານອອກຫນັງສືຜ່ານແດນ ໄດ້ອອກຫນັງສືຜ່ານແດນໃຫ້ຍ້ອນຄວາມຜິດພາດທາງດ້ານເຕັກນິກ;

3) ຜູ້ຖືຫນັງສືຜ່ານແດນບໍ່ມີເງື່ອນໄຂຄົບຖ້ວນທີ່ຈະຖືຫນັງສືຜ່ານແດນປະເພດທີ່ຕົນຖືອີກຕໍ່ໄປ;

4) ຫນັງສືຜ່ານແດນທີ່ຖືກແຈ້ງລົບລ້າງ ຫລື ຫນັງສືຜ່ານແດນຈາກບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທີ່ບໍ່ມີສິດຄອບຄອງ.

21.2 ພາຍຫລັງສິ້ນສຸດພາລະກິດທີ່ກ່ຽວຂ້ອງກັບການນຳໃຊ້ຫນັງສືຜ່ານແດນການທູດ ຫລື ຫນັງສືຜ່ານແດນລັດຖະການ ຫລື ຜູ້ຖືບໍ່ມີເງື່ອນໄຂ ແລະ ມາດຖານຄົບຖ້ວນທີ່ຈະຖືຫນັງສືຜ່ານແດນການທູດ ຫລື ຫນັງສືຜ່ານແດນລັດຖະການອີກຕໍ່ໄປ ໃຫ້ສົ່ງຫນັງສືຜ່ານແດນການທູດ ຫລື ຫນັງສືຜ່ານແດນລັດຖະການທີ່ຕົນຖືນັ້ນ ຄືນໃຫ້ກະຊວງການຕ່າງປະເທດ.

**ມາດຕາ 22. ການແຈ້ງຫນັງສືຜ່ານແດນເສຍ ຫລື ຖືກລັກ**

ເມື່ອຮູ້ວ່າ ຕົນເຮັດຫນັງສືຜ່ານແດນເສຍ ຫລື ຫນັງສືຜ່ານແດນຂອງຕົນຖືກລັກ ຜູ້ຖືຫນັງສືຜ່ານແດນ ຕ້ອງແຈ້ງໃຫ້ເຈົ້າຫນ້າທີ່ທ້ອງຖິ່ນບ່ອນທີ່ຫນັງສືຜ່ານແດນເສຍ ຫລື ຖືກລັກໂດຍດ່ວນ. ພ້ອມດຽວກັນນັ້ນ ກໍຕ້ອງແຈ້ງໃຫ້ສຳນັກງານອອກຫນັງສືຜ່ານແດນຊາບ. ໃນກໍລະນີທີ່ຫນັງສືຜ່ານແດນເສຍ ຫລື ຖືກລັກຢູ່ຕ່າງປະເທດ ກໍໃຫ້ແຈ້ງຕໍ່ເຈົ້າຫນ້າທີ່ທີ່ກ່ຽວຂ້ອງຂອງປະເທດເຈົ້າພາບໂດຍດ່ວນ ແລະ ໃນເວລາດຽວກັນ ກໍຕ້ອງແຈ້ງໃຫ້ສຳນັກງານຜູ້ຕາງຫນ້າທີ່ຕັ້ງຢູ່ໃກ້ທີ່ສຸດຊາບ.

## ຫມວດທີ 4
## ຄວາມຮັບຜິດຊອບຂອງຜູ້ຖືຫນັງສືຜ່ານແດນ ແລະ ຂໍ້ຫ້າມກ່ຽວກັບຫນັງສືຜ່ານແດນ

**ມາດມາ 23. ຄວາມຮັບຜິດຊອບຂອງຜູ້ຖືຫນັງສືຜ່ານແດນ**

ຜູ້ຖືຫນັງສືຜ່ານແດນ ມີຄວາມຮັບຜິດຊອບ ດັ່ງນີ້:

1. ເກັບ ແລະ ຮັກສາຫນັງສືຜ່ານແດນໄວ້ໃນບ່ອນທີ່ປອດໄພ, ບໍ່ໃຫ້ເປື້ອນເປິະ ຫລື ຈີກຂາດ;
2. ນຳໃຊ້ຫນັງສືຜ່ານແດນໃຫ້ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະ ລະບຽບກົດຫມາຍຂອງ ສ ປປ ລາວ;
3. ປະຕິບັດການແຈ້ງຫນັງສືຜ່ານແດນເສຍ ຫລື ຖືກລັກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງດຳລັດສະບັບນີ້, ໃນກໍລະນີຫນັງສືຜ່ານແດນຂອງຕົນເສຍ ຫລື ຖືກລັກ.

**ມາດຕາ 24. ຂໍ້ຫ້າມ**

ຂໍ້ຫ້າມກ່ຽວກັບຫນັງສືຜ່ານແດນ ມີດັ່ງນີ້:

1. ຫ້າມບຸກຄົນ, ນິຕິບຸກຄົນ ຫລື ອົງການຈັດຕັ້ງໃດຫນຶ່ງ ພິມ, ປອມ, ປອມແປງ, ຊື້, ຂາຍ, ໂອນ, ທຳລາຍ, ມີໄວ້ໃນຄອບຄອງ, ກັກ, ຍຶດຫນັງສືຜ່ານແດນ ແລະ ດັດແກ້, ເພີ່ມເຕີມ, ປ່ຽນແປງຂໍ້ມູນ ຫລື ລົງຫມາຍເຫດໃນຫນັງສືຜ່ານແດນ;
2. ຫ້າມຜູ້ຖືຫນັງສືຜ່ານແດນ ນຳໃຊ້ຫນັງສືຜ່ານແດນໃນທາງທີ່ບໍ່ຖືກຕ້ອງ ຫລື ເອົາຫນັງສືຜ່ານແດນຂອງຕົນໃຫ້ຜູ້ອື່ນນຳໃຊ້.
3. ຫ້າມເຈົ້າຫນ້າທີ່ ເປີດເຜີຍຄວາມລັບສ່ວນຕົວຂອງຜູ້ຍື່ນຄຳຮ້ອງຂໍຫນັງສືຜ່ານແດນ ຖ້າຫາກບໍ່ໄດ້ຮັບການສະເຫນີຈາກອົງການທີ່ມີສິດຂອງ ສປປ ລາວ.

## ຫມວດທີ 5
## ຄ່າທຳນຽມ, ຄ່າບໍລິການ ແລະ ງົບປະມານ

**ມາດຕາ 25. ຄ່າທຳນຽມ ແລະ ຄ່າບໍລິການ**

ຄ່າທຳນຽມ ແລະ ຄ່າບໍລິການວິຊາການຕ່າງໆໃນການອອກ, ຕໍ່ອາຍຸນຳໃຊ້, ດັດແກ້, ເພີ່ມເຕີມ, ລົງຫມາຍເຫດໃນຫນັງສືຜ່ານແດນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ.

ຄ່າທຳນຽມ ແລະ ຄ່າບໍລິການວິຊາການຕ່າງໆ ຖືເປັນລາຍຮັບຂອງລັດ.

**ມາດຕາ 26. ງົບປະມານ**

ລັດຖະບານ ເປັນຜູ້ສະຫນອງງົບປະມານ ເພື່ອນຳໃຊ້ເຂົ້າໃນການພິມ ແລະ ການອອກຫນັງສືຜ່ານແດນ, ການຈັດຊື້ອຸປະກອນຮັບໃຊ້ໃຫ້ແກ່ການອອກຫນັງສືຜ່ານແດນ ລວມທັງການຈັດຊື້ ແລະ ການປະກອບເຕັກໂນໂລຊີ ເພື່ອນຳໃຊ້ເຂົ້າໃນການຄຸ້ມຄອງຫນັງສືຜ່ານແດນ.

## ຫມວດທີ 6
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 27. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫລື ປະຕິບັດນະໂຍບາຍອື່ນໆ ຕາມລະບຽບກົດຫມາຍ.

**ມາດຕາ 28. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫລື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກປະຕິບັດມາດຕະການຕ່າງໆ ເຊັ່ນ: ກ່າວເຕືອນ, ປະຕິບັດວິໄນ, ປັບໄຫມ ຫລື ມາດຕະການທາງອາຍາ ແລ້ວແຕ່ກໍລະນີເບົາ ຫລື ຫນັກ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 29. ການຈັດຕັ້ງປະຕິບັດ**

ກະຊວງການຕ່າງປະເທດ ອອກລະບຽບການລະອຽດເພື່ອຈັດຕັ້ງປະຕິບັດດຳລັດສະບັບນີ້.

ອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ, ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 30. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

**ທອງສິງ ທຳມະວົງ**